ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

PCD

ເລກທີ 126 /ພກພ

ນະຄອນຫລວງວຽງຈັນ, ວັນທີ 02 JUL 2026

ຮຽນ: ທ່ານຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)
: ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
: ທ່ານຜູ້ຖືຮຸ້ນ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ເລື່ອງ: ການຮັບຮອງເອົາ ບໍລິສັດ ທີຊີ ບໍລິການ ບັນຊີ ຈຳກັດ ເປັນບໍລິສັດກວດສອບ ປ່ຽນແທນ PWC.

- ອີງຕາມ: ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງ ສຄຄຊ ເລກທີ: 27/ຄຄຊ, ລົງວັນທີ: 29/03/2022
- ອີງຕາມ: ລະບຽບ ວ່າດ້ວຍການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວສະບັບເລກທີ: 008/ຕລຊລ, ລົງວັນທີ: 27/09/2018

ບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (ພກພ) ຂໍຖືເປັນກຽດແຈ້ງມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ III ປີ 2026 ເຊິ່ງໄດ້ຈັດຂຶ້ນໃນວັນທີ: 1/07/2026 ເວລາ 15:00 ໂມງ ທີ່ຫ້ອງປະຊຸມ ຊັ້ນ 3 ໂຮງແຮມ ຄອນຕິເນັນໂທ ພລາຊ່າບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ປອ ສີທອງ ພົມມະຈິດ ປະທານສະພາບໍລິຫານ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (PCD) ພ້ອມດ້ວຍຜູ້ເຂົ້າຮ່ວມ 6 ທ່ານ ດັ່ງນີ້:

1. ທ່ານ ສີທອງ ພົມມະຈິດ ປະທານສະພາບໍລິຫານ
2. ທ່ານ ສີທາ ພົມມະຈິດ ຮອງປະທານສະພາບໍລິຫານ
3. ທ່ານ ແພງ ດວງເງິນ ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ PCD
4. ທ່ານ ບັນທະລັດ ທິລະກຸນ ສະມາຊິກສະພາບໍລິຫານ/ສະມາຊິກອິດສະຫຼະ
5. ທ່ານ ນາງໄຮທອງ ພົມມະຈິດ ສະມາຊິກສະພາບໍລິຫານ/ຮອງຜູ້ອຳນວຍການໃຫຍ່ຝ່າຍບັນຊີ-ການເງິນ,
6. ທ່ານ ພຸດທະເສນ ພົມມີໄຊ ສະມາຊິກສະພາບໍລິຫານ/ສະມາຊິກອິດສະຫຼະ

➢ ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີເປັນເອກະພາບກັນ ດັ່ງນີ້:

1. ເຫັນດີຮັບຮອງເອົາ ບໍລິສັດ ທີຊີ ບໍລິການ ບັນຊີ ຈຳກັດ ເປັນບໍລິສັດກວດສອບຂອງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ປະຈຳປີ 2026 ປ່ຽນແທນ PWC ແລະ ເຫັນດີໃຫ້ເຊັນສັນຍາ 3 ປີ (2026, 2027, 2028).

ກອງປະຊຸມໄດ້ອັດລົງໃນເວລາ 15:30 ໂມງ ຂອງວັນທີ: ~~1/07/2026~~.

ປະທານສະພາບໍລິຫານ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ Phousy Construction and Development Public Company

ປອ ສີທອງ ພົມມະຈິດ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມຄອນຕິເນັນໂທ ພລາຊ່າວຽງຈັນ, ບ້ານໜອງບົວທອງໃຕ້, ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ.
Tel: (856-21) 229696, Fax: (856-21)265394; E-mail: info@pcdlao.com; website: www.pcdlao.com